ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 036 /ນຍ.

ນະຄອນຫລວງວຽງຈັນ, ວັນທີ 22/ 01 / 2010

# ດຳລັດ

## ວ່າດ້ວຍການສ້າງ ແລະ ພັດທະນາສີມືແຮງງານ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02 /ສພຊ, ລົງວັນທີ 6 ພຶດສະພາ 2003 ;
- ອີງຕາມກົດໝາຍ ວ່າດວ້ຍແຮງງານ ສະບັບເລກທີ 06/ສພຊ, ລົງວັນທີ 27 ທັນວາ 2006 ;
- ອີງຕາມກົດໝາຍ ວ່າດ້ວຍການສຶກສາ ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີ ວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 058/ຮສສ, ລົງວັນທີ 12 ມັງກອນ 2010.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງ ແລະ ພັດທະນາສີມືແຮງງານ, ການທົດສອບ ແລະ ອອກໃບຢັ້ງຢືນລະດັບມາດຕະຖານສີມືແຮງງານ ເພື່ອຮັບປະກັນໃຫ້ຜູ້ອອກແຮງງານມີ ຄວາມຮູ້, ຄວາມສາມາດ, ປະດິດສ້າງ, ມີສີມື, ລະບຽບໃນການອອກແຮງງານ, ມີວຽກເຮັດງານທຳ ແລະຄວາມຮູ້ພື້ນຖານດ້ານກົດໝາຍ ແນໃສ່ຕອບສະໜອງທັນກັບຄວາມຕ້ອງການຂອງຕະຫລາດແຮງງານ ແລະແຜນພັດທະນາເສດຖະກິດ-ສັງຄົມ ຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝຂອງພັກ-ລັດຖະບານ.

**ມາດຕາ 2. ການສ້າງສີມືແຮງງານ**

ການສ້າງສີມືແຮງງານ ແມ່ນການສະໜອງການຮຽນ-ການສອນ ເຕັກນິກ-ວິຊາຊີບ ໃນສາຍອາຊີວະສຶກສາຕາມລະດັບ ແລະ ສາຂາວິຊາຕ່າງໆ ເພື່ອສ້າງແຮງງານລາວໃຫ້ມີ ຄວາມຮູ້, ທັກສະສີມື ແລະ ທັດສະນະຄຸນສົມບັດທີ່ຈຳເປັນ ໃຫ້ສາມາດເຂົ້າເຮັດວຽກໃນສະຖານປະກອບກິດຈະການ ແລະ ປະກອບທຸລະກິດ